**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ                                                    1918----

ກົມແຜນການ                                                    ເລກທີ 1918 /ພກ

ນະຄອນຫຼວງວຽງຈັນ, ວັນທີ ໒໐ ມິຖຸນາ 2023

**ມະຕິ**

**ກອງປະຊຸມຖອດຖອນບົດຮຽນການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນພາຍໃນປະເທດ ສົກຮຽນ 2022-2023 ແລະ ສ້າງແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນພາຍໃນປະເທດ ສົກຮຽນ 2023-2024**

ກອງປະຊຸມຖອດຖອນບົດຮຽນການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານ ເຂົ້າຮຽນພາຍໃນປະເທດ ສົກຮຽນ 2022-2023 ແລະ ສ້າງແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນພາຍໃນປະເທດ ສົກຮຽນ 2023-2024 ໄດ້ຈັດຂຶ້ນໃນວັນທີ 14-15 ມິຖຸນາ 2023 ທີ່ຣີສອດນາປ່າກວາງ (ທ່າລາດ), ເມືອງແກ້ວອຸດົມ, ແຂວງວຽງຈັນ ພາຍໃຕ້ການເປັນປະທານຂອງ **ທ່ານ ປອ ບຸນປັນ ໄຊມຸນຕີຣ ຫົວໜ້າກົມແຜນການ, ກະຊວງສຶກສາທິການ ແລະ ກິລາ,** ໂດຍມີບັນດາທ່ານຫົວໜ້າກົມ, ຮອງອະທິການບໍດີ, ມະຫາວິທະຍາໄລ , ຮອງຫົວໜ້າກົມ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ຕາງໜ້າຈາກກົມວິຊາການ ຂອງກະຊວງສຶກສາທິການ ແລະ ກິລາ, ກະຊວງສາທາລະນະສຸກ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງຍຸຕິທຳ, ກະຊວງການເງິນ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ສະຖາບັນທະນາຄານ, ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ ແລະ ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງ, ພະແນກສຶກສາທິການ ແລະ ກິລາ ແຂວງວຽງຈັນ, ພະນັກງານວິຊາການ ແລະ ຄະນະຮັບຜິດຊອບກອງປະຊຸມເຂົ້າຮ່ວມ ລວມທັງໝົດ 36 ທ່ານ (ຍິງ 5 ທ່ານ).

ກອງປະຊຸມ ໄດ້ມີການລາຍງານ, ສົນທະນາ ປຶກສາຫາລື ແລະ ມີຄຳເຫັນກ່ຽວກັບເນື້ອໃນດັ່ງນີ້: (1) ການລາຍງານແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານ ເຂົ້າຮຽນພາຍໃນປະເທດ ສົກຮຽນ 2022-2023 ແລະ ແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານ ເຂົ້າຮຽນພາຍໃນປະເທດ ສົກຮຽນ 2023-2024, (2) ຮ່າງຂໍ້ຕົກລົງແຜນແບ່ງປັນສັບຊ້ອນນັກຮຽນ-ນັກສຶກສາ ແລະ ພະນັກງານລັດຖະກອນເຂົ້າຮຽນພາຍໃນປະເທດ, (3) ການສະຫຼຸບລາຍງານການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນ ແລະ ແຜນລະອຽດຂອງບັນດາກົມວິຊາການກ່ຽວຂ້ອງຂອງກະຊວງສຶກສາທິການ ແລະ ກິລາ ແລະ ບັນດາກະຊວງຕ່າງໆທີ່ມີສະຖາບັນການສຶກສາຂຶ້ນກັບ,

(4) ຮ່າງແຈ້ງການວ່າດ້ວຍການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານ ເຂົ້າຮຽນພາຍໃນປະເທດ ສົກຮຽນ 2023-2024.

ຜ່ານການຮັບຟັງ, ປຶກສາຫາລື, ຄົ້ນຄວ້າປະກອບຄຳຄິດເຫັນຢ່າງຕັ້ງໜ້າ, ກົງໄປກົງມາ ແລະ ສ້າງສັນຂອງ ຜູ້ແທນເຂົ້າຮ່ວມ ກອງປະຊຸມໄດ້ມີຄວາມເປັນເອກະພາບກັນໂດຍພື້ນຖານຮັບຮອງເອົາ ບົດບັນທຶກນີ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນພາຍໃນປະເທດສົກຮຽນ 2023-2024 ດັ່ງນີ້:

1. ນະໂຍບາຍຫຼັກສຳລັບການເຂົ້າຮຽນມະຫາວິທະຍາໄລ ແມ່ນແບ່ງປັນໂຕເລກນັກຮຽນ-ນັກສຶກສາ ທີ່ໄດ້ຮັບເບ້ຍລ້ຽງຂອງລັດຖະບານ (ໃນແຜນ) ໃນ 20% ຂອງແຜນຮັບທັງໝົດ. ໃນນີ້ 10% ແມ່ນມອບໃຫ້ມະຫາວິທະຍາໄລ ຄັດເລືອກຕາມຜົນການສອບເສັງເຂົ້າມະຫາວິທະຍາໄລ ແລະ 10% ມອບໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງຄັດເລືອກແບ່ງປັນໃຫ້ນັກຮຽນຕາມຜົນການຮຽນດີເດັ່ນ,ຜູ້ທີ່ມີຜົນງານດີເດັ່ນ,ນັກຮຽນເກັ່ງ, ຜູ້ທຸກຍາກ, ຊົນເຜົ່າ ແລະ ພິການ ຕາມແຈ້ງການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານ ເຂົ້າຮຽນ ພາຍໃນປະເທດ ສຳລັບສົກຮຽນ 2023-2024 ແລະ 80% ແມ່ນຈ່າຍຄ່າຮຽນ; ສຳລັບການແບ່ງປັນຕົວເລກໃນຄະນະເສດຖະສາດ-ບໍລິຫານທຸລະກິດ, ວິຊາພາສາອັງກິດ ໃນຄະນະອັກສອນສາດ, ຄະນະສຶກສາສາດ, ຕົວເລກຕໍ່ເນື່ອງ ແລະ ພະນັກງານຮຽນຕໍ່ເນື່ອງ ແມ່ນຍັງປະຕິບັດຄືທີ່ຜ່ານມາ ດັ່ງທີ່ກຳນົດໃນແຈ້ງການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານ ເຂົ້າຮຽນ ພາຍໃນປະເທດ ສົກປີຮຽນ 2022-2023 ສະບັບເລກທີ 791/ສສກ ລົງວັນທີ 10 ສິງຫາ 2022;
2. ນະໂຍບາຍຫຼັກສຳລັບການເຂົ້າຮຽນໃນສະຖາບັນສ້າງຄູ ແບ່ງປັນໃນແຜນ ຂອງສາຍສ້າງຄູ ທີ່ເປັນເບ້ຍລ້ຽງຂອງລັດຖະບານ 20% ຂອງແຜນຮັບທັງໝົດ. ໃນນີ້ 10% ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ຄັດເລືອກເອົານັກຮຽນ ມ. ປາຍ ທີ່ສອບເສັງເຂົ້າຮຽນສາຍສ້າງຄູ ແລະ 10% ໃຫ້ວິທະຍາໄລຄູຄັດເລືອກເອົານັກຮຽນ ມ. ປາຍ ທີ່ສອບເສັງເຂົ້າຮຽນສາຍສ້າງຄູທີ່ໄດ້ຄະແນນສູງກວ່າໝູ່ໄດ້ຮັບທຶນເບ້ຍລ້ຽງຂອງລັດຖະບານ; ສ່ວນທີ່ເຫຼືອ 80% ແມ່ນຕົວເລກຈ່າຍຄ່າຮຽນ.
3. ນະໂຍບາຍຫຼັກສຳລັບການເຂົ້າຮຽນໃນສະຖານອາຊີວະສຶກສາ ກຳນົດແບ່ງປັນໂຕເລກນັກຮຽນ-ນັກສຶກສາ ທີ່ໄດ້ຮັບເບ້ຍລ້ຽງຂອງລັດຖະບານ ໃນວິຊາທີ່ນອນຢູ່ໃນວິຊາສຳພາດເຂົ້າຮຽນ ສະເລ່ຍ 40% ຂອງແຜນຮັບນັກຮຽນທັງໝົດ, ສ່ວນທີ່ເຫຼືອ 60% ແມ່ນຕົວເລກ ສອບເສັງ ແລະ ຈ່າຍຄ່າຮຽນ; ແຕ່ການຮັບນັກຮຽນໃນສາຍອາຊີວະສຶກສາ ແລະ ວິຊາຊີບ ຕົວຈິງຄວນພິຈາລະນາ ເພີ່ມຕົວເລກໃຫ້ສາຂາວິຊາ ທີ່ຫັນເຂົ້າສູ່ການຜະລິດໂດຍກົງ ແລະ ສາຂາວິຊາກະສິກຳ ຕາມຄວາມເໝາະສົມ; ສຳລັບການຈັດຕັ້ງປະຕິບັດ ການຄັດເລືອກນັກຮຽນຈົບມັດທະຍົມຕອນຕົ້ນເຂົ້າຮຽນໃນສາຍອາຊີວະສຶກສາ ແມ່ນໃຫ້ປະຕິບັດຕາມແຈ້ງການຂອງກົມອາຊີວະສຶກສາ, ກະຊວງສຶກສາທິການ ແລະ ກິລາ;
4. ນັກຮຽນທີ່ຮຽນຈົບສາຍສາມັນສຶກສາ(ມໍ7)ໄດ້ຮັບນະໂຍບາຍ ແລະ ບຸລິມະສິດພິເສດສາມາດເລືອກຮຽນໄດ້ທຸກຄະນະວິຊາ,ທຸກສາຂາວິຊາ ຢູ່ມະຫາວິທະຍາໄລ 04 ແຫ່ງທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ແມ່ນນັກຮຽນເກັ່ງລະດັບຊາດ(ທີ1 ຫາ ທີ3), ນັກຮຽນໄດ້ປະກາສະນີຍະບັດແດງ ແລະ ນັກຮຽນເກັ່ງ ທີ 1 ຂອງແຂວງ/ນະຄອນຫຼວງ;

5. ສໍາລັບນັກຮຽນທີ່ຮຽນຈົບສາຍສາມັນສຶກສາ(ມ7) ຈະໄປຮຽນແພດສາດ ຢູ່ມະຫາວິທະຍາໄລວິທະຍາສາດສຸຂະພາບ, ກະຊວງສາທາລະນະສຸກ ຕ້ອງແມ່ນນັກຮຽນໄດ້ຮັບປະກາສະນີຍະບັດແດງ ຫຼື ນັກຮຽນເກັ່ງຮອບດ້ານ (ຄະແນນ 9 ຂຶ້ນໄປທຸກວິຊາ) ແລະ ຄົບມາດຖານ, ເງື່ອນໄຂຕ່າງໆຂອງມະຫາວິທະຍາໄລດັ່ງກ່າວກໍານົດໄວ້;
6. ມອບໃຫ້ຄະນະຮັບຜິດຊອບກອງປະຊຸມປັບປຸງຄືນ(ຮ່າງ)ຂໍ້ຕົກລົງແຜນແບ່ງປັນສົບຊ້ອນນັກຮຽນ-ນັກສຶກສາ ແລະ ພະນັກງານລັດຖະກອນເຂົ້າຮຽນພາຍໃນປະເທດ, (ຮ່າງ)ແຈ້ງການວ່າດ້ວຍການຈັດຕັ້ງປະຕິບັດແຜນແບ່ງປັນສົບຊ້ອນນັກຮຽນ-ພະນັກງານ ຕາມຄໍາເຫັນຂອງທີ່ປະຊຸມ, ຫຼັງຈາກນັ້ນນໍາເອກະສານດັ່ງກ່າວເຂົ້າກອງປະຊຸມຄະນະລັດຖະມົນຕີ ເພື່ອຂໍອະນຸມັດ;
7. ໃຫ້ມີການສົ່ງເສີມນັກຮຽນເກັ່ງ ມາຮຽນສາຍສ້າງຄູ ໂດຍໃຫ້ກົມວິຊາການ ເຮັດການຄົ້ນຄວ້າ ແລະ ປຶກສາຫາລືເຖິງວິທີການ ແລະ ກົນໄກ ໃນການຈັດຕັ້ງປະຕິບັດທີ່ເໝາະສົມເພື່ອສະເໜີໃຫ້ຄະນະນໍາພິຈາລະນາ;
8. ເພື່ອສົ່ງເສີມສາຂາວິທະຍາສາດທໍາມະຊາດ ແລະ ສ້າງຄວາມດຶງດູດໃຈໃຫ້ນັກຮຽນມີຄວາມສົນໃຈ ແລະ ຢາກຮຽນສາຍວິຊາດັ່ງກ່າວໃຫ້ຫຼາຍຂຶ້ນ ຕ້ອງໄດ້ລົງທຶນໃສ່ການຍົກສູງຄຸນນະພາບ ແລະ ອຸປະກອນຮັບໃຊ້ໃນການຮຽນ-ການສອນ ແລະ ການວິໄຈໃຫ້ທັນສະໄໝ. ພ້ອມທັງສົ່ງເສີມໃຫ້ພາກທຸລະກິດ ແລະ ຜູ້ປະກອບການບັນຈຸນັກສຶກສາ ທີ່ຮຽນຈົບສາຂາວິທະຍາສາດ;
9. ມອບໃຫ້ສະຖາບັນການສຶກສາຕ່າງໆ ລົງແນະແນວວິຊາຊີບ ໃຫ້ແກ່ນັກຮຽນ-ຜູ້ປົກຄອງໃນລະດັບໂຮງຮຽນມັດທະຍົມຕອນຕົ້ນ ແລະ ມັດທະຍົມຕອນປາຍ ໃຫ້ຮັບຮູ້, ເຂົ້າໃຈຄວາມໝາຍ ແລະ ຄຸນຄ່າຂອງສາຂາວິຊາຕ່າງໆ; ພ້ອມທັງສົ່ງເສີມສາຂາວິຊາ ທີ່ຕອບສະໜອງຕາມແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ແລະ ຂອງຊາດ ໃນແຕ່ລະໄລຍະ;
10. ໃຫ້ມີການເກັບກໍາສະຖິຕິນັກຮຽນ-ນັກສຶກສາທັງພາຍໃນ ແລະ ຕ່າງປະເທດ ຂອງຕົວເລກເຂົ້າຮຽນທຽບໃສ່ແຜນອະນຸມັດປະຈໍາປີ ເພື່ອສາມາດເຫັນໄດ້ສະພາບລວມວ່າ ນັກຮຽນຈົບ ມ4 ແລະ ມ7 ໄປຮຽນ, ສຶກສາຢູ່ຕ່າງປະເທດ ເທົ່າໃດ ທຽບໃສ່ ການເຂົ້າຮຽນ, ສຶກສາ ຢູ່ພາຍໃນປະເທດ;
11. ໃຫ້ມີເຄື່ອງມື, ກົນໄກ, ຕິດຕາມ, ກວດກາ, ການບັນຈຸສົບຊ້ອນຕົວຈິງ, ການມີວຽກເຮັດງານທໍາໃນໄລຍະຜ່ານມາ ແລະ ໃນຕໍ່ໜ້າຢ່າງເປັນປົກກະຕິ ເພື່ອໃຫ້ມີຂໍ້ມູນສົມທຽບໃສ່ການລົງທຶນ, ການໃຊ້ຈ່າຍງົບປະມານຂອງລັດຖະບານ ຕໍ່ການກໍ່ສ້າງຊັບພະຍາກອນມະນຸດ;
12. ການກໍານົດຕົວເລກແບ່ງປັນສົບຊ້ອນນັກຮຽນເຂົ້າຮຽນໃນສະຖາບັນການສຶກສາຊັ້ນສູງ, ສະຖາບັນສ້າງຄູ, ສະຖາບັນອາຊີວະສຶກສາ ແລະ ສະຖາບັນການສຶກສາທີ່ກັບກະຊວງອື່ນໆຕ້ອງຮັບຕາມຫຼັກສູດທີ່ໄດ້ຮັບອະນຸຍາດຈາກກະຊວງສຶກສາທິການ ແລະ ກິລາເທົ່ານັ້ນ, ໂດຍບໍ່ອະນຸຍາດໃຫ້ສະຖາບັນອື່ນໆຮັບຕົວເລກຕາມຄວາມອາດສາມາດ ຂອງ ສະຖາບັນເປັນຫຼັກ;
13. ມອບໃຫ້ບັນດາກົມວິຊາການຕ່າງໆກວດກາຄືນຕົວເລກແຜນຮັບນັກຮຽນ ແລະ ພະນັກງານເຂົ້າຮຽນໃນສົກຮຽນ 2023-2024 ພ້ອມທັງຢັ້ງຢືນ ແລະ ຮັບຮອງຕົວເລກແລ້ວ ສົ່ງໃຫ້ຫ້ອງການພັດທະນາຊັບພະຍາກອນມະນຸດ, ກົມແຜນການ **ກ່ອນວັນທີ 30 ມິຖຸນາ 2023** ເພື່ອສັງລວມເຂົ້າແຜນນັກຮຽນ-ພະນັກງານເຂົ້າຮຽນສໍາລັບສົກຮຽນ 2023-2024;
14. ມອບໃຫ້ກົມແຜນການຈັດກອງປະຊຸມວິຊາການປຶກສາຫາລື ການຈັດຕັ້ງປະຕິບັດແຜນແບ່ງປັນສົບຊ້ອນນັກຮຽນ ແລະ ພະນັກງານເຂົ້າຮຽນພາຍໃນປະເທດສົກປີ 2023-2024 ຮ່ວມກັບບັນດາ ແຂວງ/ນະຄອນຫຼວງ,

ກົມວິຊາການຕ່າງໆ ແລະ ບັນດາກະຊວງຕ່າງໆທີ່ມີສະຖາບັນການສຶກສາຂັ້ນກັບເພື່ອຜ່ານຕົວເລກ ແລະ ຮັບຮອງຕົວເລກ ແບບເຊິ່ງໜ້າ ຫຼື ຜ່ານຮູບແບບລະບົບອອນລາຍ, ຫຼັງຈາກນັ້ນ ແລ້ວລາຍງານຜົນກອງປະຊຸມໃຫ້ຄະນະນຳກະຊວງສຶກສາທິການ ແລະ ກິລາ ຮັບຊາບເພື່ອຂໍອະນຸມັດ ແລະ ແຈກຢາຍແຜນຮັບນັກຮຽນ-ພະນັກງານເຂົ້າຮຽນ ສຳລັບສົກປີ 2023-2024;

15. ມອບໃຫ້ກົມແຜນການປັບປຸງແຈ້ງການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນພາຍໃນປະເທດ ສົກປີຮຽນ 2023-2024 ຕາມທິດຊີ້ນຳ ແລະ ຄຳເຫັນຂອງທີ່ປະຊຸມ ແລ້ວສະເໜີຄະນະນຳກະຊວງສຶກສາທິການ ແລະ ກິລາເພື່ອຂໍອະນຸມັດ ໃນຕົ້ນເດືອນສິງຫາ ປີ 2023;

16. ມອບໃຫ້ຄະນະກຳມະການຄັດເລືອກ, ແບ່ງປັນ ແລະ ສັບຊ້ອນນັກຮຽນ-ພະນັກງານ ເຂົ້າຮຽນຕ້ອງເອົາໃຈໃສ່ໃຫ້ປະຕິບັດຕາມມາດຖານ ແລະ ເງື່ອນໄຂທີ່ກຳນົດໄວ້ ໃນແຈ້ງການຈັດຕັ້ງປະຕິບັດ ແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນພາຍໃນປະເທດ ສົກປີຮຽນ 2023-2024 ຢ່າງເຄັ່ງຄັດ.

ປະທານກອງປະຊຸມ

ຫົວໜ້າກົມ

ກະຊວງສຶກສາທິການ ແລະ ກິລາ

ກົມແຜນການ

ປອ ບຸນປັນ ໄຊມຸນຕຣີ